**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**
**Tel/fax: 021 732 162 Mobile: 020 5526277**
**Email: leap@laoex.org**
**Email: cetdu@laoex.orgg**



# ການພັດທະນາ
# ຊຸມຊົນ ແລະວິຊາການບ້ານ



## ເອກະສານ ປະກອບການຝຶກອົບຮົມ 12:

CETDU
Central Extension
Training and
Development Unit

ປື້ມຄູ່ມືໃນການສົ່ງເສີມກະສິກຳແມ່ນຫົວຂໍ້ຕໍ່ເນື່ອງຊຶ່ງລວມມີ:

- ວິທີການສົ່ງເສີມ (ພາກ 1 ຫາ 19)
- ເຄື່ອງມື ສຳລັບວິທີການສົ່ງເສີມກະສິກຳ ແລະປ່າໄມ້
- ປື້ມຄູ່ມື ກ່ຽວກັບເຕັກນິກ ກະສິກຳ ລ້ຽງສັດ ປູກຝັງຫລັກສູດ (ພະນັກງານສົ່ງເສີມ ຂັ້ນເມືອງ ແລະພະນັກງານສົ່ງເສີມຂັ້ນບ້ານ)

ປື້ມຄູ່ມືດັ່ງກ່າວແມ່ນເຈດຕະນາເຮັດໃຫ້ການນຳໃຊ້ງ່າຍຂຶ້ນໃນການຈັດຕັ້ງປະຕິບັດ ແລະ ນຳສະເຫນີຈຸດປະສົງຂໍ້ມູນເບື້ອງຕົ້ນຂອງວິທີການສົ່ງເສີມກິສິກຳ. ປື້ມຄູ່ມືດັ່ງກ່າວໄດ້ຖືກພັດທະນາໃນບາດກ້າວທຳອິດຂອງໂຄງການ Leap ໂດຍການ ຮ່ວມມືກັບພະນັກງານຄູຝຶກຂອງກອງສົ່ງເສີມກະສິກຳ ແລະປ່າໄມ້ (ໂດຍແມ່ນ ພະນັກງານວິຊາການ CETDU) ຄວາມມຸ້ງຫມາຍແມ່ນເພື່ອພັດທະນາເປັນເຄື່ອງມືໃຫ້ພະນັກງານ ສົ່ງເສີມຂັ້ນເມືອງສາມາດຖ່າຍທອດໄປເຖິງຄວາມຕ້ອງການຂອງຊາວກະສິກອນ.

**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**
**Tel/fax: 021 732 162 Mobile: 020 5526277**
**Email: leap@laoex.org**
**Email: cetdu@laoex.org**

## ປື້ມຄູ່ມືໃນແຕ່ລະເລື້ອງ

**I. ເອກະສານປະກອບການຝຶກອົບຮົມຄັ້ງທີ 1**

1. ລະບົບ ແລະຂະບວນການຝຶກ _ ສົ່ງເສີມວຽກງານກະສິກຳ ແລະປ່າໄມ້
2. ວິທີການປະເມີນຄວາມຕ້ອງການຝຶກ_ສົ່ງເສີມ ຊາວກະສິກອນ (TNA _ Kiss)
3. ເຕັກນິກການພົວພັນ_ສື່ສານທີ່ມີປະສິດທິພາບ
4. ວິທີການເຮັດວຽກກັບຊາວກະສິກອນ
5. ຄູ່ມືພາກສະໜາມ ສຳລັບນັກສົ່ງເສີມ

**II. ເອກະສານປະກອບການຝຶກອົບຮົມຄັ້ງທີ 2**

6. ວິທີການຝຶກອົບຮົມ_ສົ່ງເສີມຊາວກະສິກອນທີ່ມີປະສິດທິພາບ
7. ບາງເຕັກນິກການຝຶກອົບຮົມແບບມີສ່ວນຮ່ວມ
8. ການຝຶກອົບຮົມແບບມີສ່ວນຮ່ວມ
9. ເຕັກນິກພື້ນຖານສຳລັບວິທະຍາກອນ
10. ການພັດທະນາກຸ່ມຜູ້ຜະລິດ
11. ການຄຸ້ມຄອງບໍລິຫານກຸ່ມທີ່ມີປະສິດທິພາບ
12. ການພັດທະນາຜູ້ນຳຊຸມຊົນ ແລະວິຊາການບ້ານ
13. ການຕິດຕາມຊຸກຍູ້ຂະບວນການຝຶກ_ສົ່ງເສີມຊາວກະສິກອນ
14. ວິທີການ, ເຄື່ອງມືການວາງແຜນ ແລະປະຕິບັດແຜນການ

**III. ເອກະສານປະກອບການຝຶກອົບຮົມຄັ້ງທີ 3**

15. ພື້ນຖານການພັດທະນາ ແລະວິທີການຝຶກສົ່ງເສີມ ແບບມີສ່ວນຮ່ວມ
16. ວິໄສທັດໃນການປັບປຸງວຽກງານການສົ່ງເສີມ ກະສິກຳ
17. ປັດໃຈມະນຸດ ແລະການພັດທະນາ ວຽກງານ ສົ່ງເສີມ ກປ
18. ການຈັດທັດສະນະສຶກສາ
19. ລະບົບ ພໍ່ປົກຄອງລູກ ຄວາມກະຕືລືລົ້ນ ແລະການມີສ່ວນຮ່ວມ



# ເອກະສານ 12: ການພັດທະນາຊຸມຊົນ ແລະວິຊາການບ້ານ

## ສາລະບານ

ບົດນຳ ........ 2
ຈຸດປະສົງ ແລະເປົ້າໝາຍ ........ 4
ຊຸມຊົນ ແລະການພັດທະນາແບບມີສ່ວນຮ່ວມ ........ 4
ໃຜຄືຜູ້ນຳຊຸມຊົນ ........ 7
ບົດບາດໜ້າທີ່ພື້ນຖານ ຂອງຜູ້ນຳຊຸມຊົນ ........ 10
ວິທີຄັດເລືອກ ແລະສ້າງຜູ້ນຳຊຸມຊົນ ........ 11
ຄຸນລັກສະນະພື້ນຖານຂອງການເປັນຜູ້ນຳ ........ 14
ຂັ້ນຕອນ ແລະວິທີການພັດທະນາວິຊາການບ້ານ ........ 15
ຂັ້ນຕອນການສ້າງວິຊາການບ້ານ ........ 23
ວິທີປູກຈິດສຳນຶກ ........ 28
ບົດບາດໜ້າທີ່ຂອງນັກສົ່ງເສີມ ........ 30

ກອງສົ່ງເສີມ ກະສິກຳ ແລະ ປ່າໄມ້
ພະແນກ ສົ່ງເສີມ ແລະ ຄຸ້ມຄອງໂຄງການ
ໜ່ວຍງານ ພັດທະນາຮູບແບບ ແລະ ຝຶກອົບຮົມ, ເມສາ 2003

I

# ແນວຄວາມຄິດພື້ນຖານໃນການ ສົ່ງເສີມຜູ້ນຳຊຸມຊົນ ແລະວິຊາການບ້ານ

## ບົດນຳ

ເປົ້າໝາຍສຳຄັນ ຂອງການສົ່ງເສີມການກະເສດ ຂອງກະຊວງກະສິກຳ ແລະປ່າໄມ້ ກໍ່ຄືຂອງກອງສົ່ງເສີມການກະເສດ ແມ່ນເພື່ອເຮັດໃຫ້ແບບແຜນການຜະລິດຂອງຊາວກະສິກອນໄດ້ຮັບການພັດທະນາປັບປຸງໄປສູ່ທິດທາງການຜະລິດທີ່ມີປະສິດທິພາບ ໂດຍນຳໃຊ້ຊັບພະຍາກອນທີ່ມີຢູ່ຢ່າງຄຸ້ມຄ່າ. ຢາກເຮັດໄດ້ແນວນັ້ນມີຄວາມຈຳເປັນຕ້ອງໄດ້ຫັນປ່ຽນທັດສະນະ ແລະແບບແຜນການຜະລິດທີ່ມີລັກສະນະຄອງເດີມເຮັດຕາມຄວາມເຄີຍຊິນ, ຕາມບູຮານນະການໃຫ້ກາຍເປັນການນຳໃຊ້ເຕັກນິກວິ ທະຍາການທີ່ເໝາະສົມ.

ສິ່ງທີ່ກ່າວມານີ້ໄດ້ມີຄວາມສຳພັນຊື່ງກັນ ແລະກັນລະຫວ່າງ (1). ບົດບາດໜ້າທີ່ຂອງພະນັກງານທີ່ເຮັດວຽກງານການສົ່ງເສີມ (2). ຄວາມຮູ້, ຄວາມສາມາດ, ຍຸດທະສາດ, ຂັ້ນຕອນ ແລະວິທີການຈັດຕັ້ງປະຕິບັດທີ່ຊັດເຈນຂອງພະນັກງານສົ່ງເສີມ ແລະຊາວກະສິກອນຜູ້ຜະລິດເອງເປັນສຳຄັນ (3). ອົງການຈັດຕັ້ງທີ່ກ່ຽວຂ້ອງກັບວຽກງານການສົ່ງເສີມເຊັ່ນ: (ຜູ້ໃຫ້ການສະໜັບສະໜູນທຶນ ແລະປັດໃຈການຜະລິດ, ຜູ້ແນະນຳເຜີຍແຜ່ ແລະຖ່າຍທອດເຕັກໂນໂລຍີ, ກຳນົດນະໂຍບາຍທີ່ເອື້ອອຳນວຍໃຫ້ເກີດມີການສົ່ງເສີມທີ່ມີປະສິດທິພາບ).

ສິ່ງສຳຄັນອີກຢ່າງໜຶ່ງ ເພື່ອເຮັດໃຫ້ການສົ່ງເສີມເກີດປະສິດທິພາບຂຶ້ນມາໄດ້ ແລະຮັບປະກັນຄວາມຍືນຍົງນັ້ນແມ່ນການສ້າງ ແລະພັດທະນາປັບປຸງຕາໜ່າງການສົ່ງເສີມກະສິກຳໃຫ້ທົ່ວເຖິງ ໃນທຸກພື້ນຖານການຜະລິດ ໂດຍອີງໃສ່ການສ້າງວິຊາການບ້ານ ແລະຜູ້ນຳກຸ່ມຜະລິດ / ຄອບຄົວຕົວແບບໃຫ້ແຜ່ຂະຫຍາຍອອກຢ່າງກວ້າງຂວາງເປັນສຳຄັນ. ທັງຮັບປະກັນໄດ້ການເປັນຕົວແທນວິຊາການໃຫ້ແກ່ກຸ່ມຂອງເຂົາເຈົ້າ ໃນການປະຕິບັດບົດບາດໜ້າທີ່ ທີ່ການເຜີຍແຜ່ຜັນຂະຫຍາຍເຕັກນິກການຜະລິດອັນໃໝ່ ແລະການບໍລິຫານວິຊາການໃນທ້ອງຖິ່ນໃຫ້ແກ່ຜູ້ຜະລິດດ້ວຍກັນ ໂດຍຜ່ານຂະບວນການຊາວນາຝຶກ ຫຼືຖ່າຍທອດບົດຮຽນໃຫ້ແກ່ຊາວນາດ້ວຍກັນ. ເຮັດໄດ້ແນວນີ້ມັນບໍ່ພຽງແຕ່ເປັນການຂະຫຍາຍໄດ້ພະນັກງານສົ່ງເສີມກະສິກຳປະຈຳບ້ານ, ແຕ່ຍັງຮັບປະກັນໄດ້ຄວາມເປັນເຈົ້າການຂອງປະຊາຊົນ ແລະຄວາມຍືນຍົງຂອງກິດຈະກຳການພັດທະນາຕາໜ່າງອີກດ້ວຍ.

ເອກະສານຂໍ້ແນະນຳນີ້ກໍບໍ່ແມ່ນຂໍ້ກຳນົດ ຫຼືຂໍ້ບັງຄັບຕ້ອງປະຕິບັດຕາມທຸກຢ່າງຫາກແຕ່ເປັນພຽງການນຳສະເໜີແນວຄວາມຄິດ, ຂັ້ນຕອນ ແລະວິທີການຕົ້ນຕໍທີ່ອາສາມາດດັດສົມ, ປັບໃຊ້ ແລະເປັນບ່ອນອີງໃນການປະຕິບັດໜ້າທີ່ວຽກງານການຊຸກຍູ້ສົ່ງເສີມຊາວກະສິກອນໂດຍກົງໄດ້ພໍສົມຄວນອາດມີຄຳສັບຍັງບໍ່ເປັນທີ່ຄຸ້ນເຄີຍ ຫຼືບໍ່ເໝາະສົມ, ພວກເຮົາຍິນດີຮັບເອົາຄຳແນະນຳຕ່າງໆ ແລະຈະປັບປຸງໃຫ້ດີຂຶ້ນເລື້ອຍໆ.

ດັ່ງນັ້ນ, ໃນຂັ້ນຕອນຕໍ່ໄປຈະໄດ້ກ່າວເຖິງວິທີການພັດທະນາ ແລະສົ່ງເສີມຜູ້ນຳຊຸມຊົນ ແລະວິຊາການບ້ານ ດັ່ງລາຍລະອຽດຕໍ່ລົງລຸ່ມນີ້:



ມາດຂອງທັງສອງຝ່າຍຈຶ່ງເປັນສິ່ງຕັດສິນຕົ້ນຕໍ, ຊຶ່ງເປັນວຽກງານຍຸດທະສາດ ແລະຕັດສິນຜົນໄດ້ຜົນເສຍຂອງວຽກງານການສົ່ງເສີມໃນຍຸກ ປະຈຸບັນທີ່ມີຄວາມທ້າທາຍຕໍ່ພາລະກິດຂອງພວກເຮົາທຸກຄົນ.

### 7.6.1. ໜ້າທີ່ອັນສຳຄັນທີ່ນັກສົ່ງເສີມຄວນປະຕິບັດ

- ສຶກສາວິເຄາະສະພາບ ແລະສະຖານະການຂອງການຜະລິດຂອງຊາວບ້ານເພື່ອຊອກຫາບັນຫາ, ສາຍເຫດແລະວິທີການແກ້ໄຂຊ່ວຍຊາວບ້ານ
- ກະຕຸ້ນໃຫ້ຊາວບ້ານຮູ້ຈັກບັນຫາຂອງຕົນ
- ກະຕຸ້ນໃຫ້ຊາວບ້ານເຫັນໄດ້ສາຍເຫດຂອງບັນຫາ
- ກະຕຸ້ນໃຫ້ຊາວບ້ານເຫັນໄດ້ທ່າແຮງໃນການນຳໃຊ້ຊັບພະຍາກອນທ້ອງຖິ່ນຂອງຕົນໃຫ້ເກີດປະໂຫຍດສູງສຸດ ແລະຮັກສາໄດ້ສະພາບແວດລ້ອມ
- ຊ່ວຍຊາວບ້ານໃນການຄົ້ນຄິດຫາທາງເລືອກທີ່ເໝາະສົມໃນການແກ້ບັນຫາ
- ຖ່າຍທອດເຕັກນິກວິທີການຜະລິດ ແລະອື່ນໆ ໃຫ້ແກ່ຊາວບ້ານ
- ຕິດຕາມແນະນຳຊາວບ້ານໃນການຈັດຕັ້ງປະຕິບັດກິດຈະກຳການຜະລິດຕ່າງໆ
- ເປັນໃຈກາງໃນການປະສານງານລະຫວ່າງຊາວບ້ານກັບອົງການຈັດຕັ້ງທີ່ກ່ຽວຂ້ອງກັບການຜະລິດ ແລະແກ້ໄຂບັນຫາຂອງຊາວບ້ານ
- ເຮັດໜ້າທີ່ຮ່ວມວາງແຜນ ແລະຊຸກຍູ້ໃຫ້ຊາວບ້ານໄດ້ມີການວາງແຜນດ້ວຍຕົນເອງ
- ຕິດຕາມ ແລະປະເມີນການປະຕິບັດແຜນຂອງຊາວບ້ານ ແລະຊ່ວຍໃຫ້ຊາວບ້ານສາມາດປະເມີນຕີລາຄາຜົນການຈັດຕັ້ງປະຕິບັດແຜນ

ສິ່ງທີ່ໄດ້ກ່າວມາຂ້າງເທິງນີ້ເຫັນໄດ້ວ່າການພັດທະນາປັບປຸງວິຊາການບ້ານມີຄວາມສຳພັນກັນຢ່າງກົມກຽວ ແລະໜັກແໜ້ນລະຫວ່າງຜູ້ສົ່ງເສີມ ແລະຜູ້ຖືກສົ່ງເສີມ. ດັ່ງນັ້ນ, ຄວາມຕັດສິນໃຈ ແລະຂີດຄວາມສາ



## 1. ຈຸດປະສົງ ແລະ ເປົ້າໝາຍ

ຈຸດປະສົງທີ່ສຳຄັນ ຂອງເອກະສານສະບັບນີ້ແມ່ນເພື່ອເປັນການແນະນຳແນວຄວາມຄິດ, ຂັ້ນຕອນ ແລະວິທີການ, ພັດທະນາຜູ້ນຳຊຸມຊົນ ແລະວິຊາການບ້ານໃຫ້ແກ່ພະນັກງານສົ່ງເສີມກະສິກຳ, ນັກພັດທະນາຊົນນະບົດ ແລະຜູ້ທີ່ສົນໃຈອື່ນໆ, ທັງນີ້ກໍແມ່ນແນໃສ່ໃຫ້ເກີດຄວາມຄິດ ແລະວິທີການປະຕິບັດທີ່ເອກະພາບ ແລະສອດຄ່ອງກັບຕົວຈິງ.

- ເປົ້າໝາຍສຳຄັນແມ່ນເພື່ອສ້າງໄດ້ຕາໜ່າງ ການສົ່ງເສີມກະສິກຳໃຫ້ມີປະສິດທິພາບ ແລະມີຄວາມຍືນຍົງໂດຍມີວິຊາການກະສິກຳປະຈຳທ້ອງຖິ່ນການຜະລິດ, ເປັນຕົວແທນທາງວິຊາການຢູ່ໃນຊຸມຊົນທີ່ປະຕິບັດບົດບາດໜ້າທີ່ການເຜີຍແຜ່ຜັນຂະຫຍາຍເຕັກນິກການຜະລິດກະສິກຳອັນໃໝ່ ແລະການບໍລິການວິຊາການໃນທ້ອງຖິ່ນໃຫ້ແກ່ຜູ້ຜະລິດໂດຍຜ່ານຂະບວນການຊາວນາຝຶກ ແລະຖ່າຍທອດໃຫ້ຊາວນາເອງ.

## 2. ຊຸມຊົນ ແລະການພັດທະນາແບບມີສ່ວນຮ່ວມ

ແນວວິທີການພັດທະນາແບບມີສ່ວນຮ່ວມ ກໍຄືການພັດທະນາທີ່ຖືເອົາຊຸມຊົນ ຫຼືກຸ່ມເປົ້າໝາຍບ່ອນຈະພັດທະນານັ້ນໆໃຫ້ເປັນເຈົ້າການ ໃນການພັດທະນາ ເພື່ອກ້າວໄປເຖິງຈຸດໝາຍປາຍທາງອັນໄດ້ແກ່: ມີຄວາມ **ສາມາດເພິ່ງຕົນເອງໄດ້ ແລະກຸ້ມຕົນເອງໄດ້ໂດຍພື້ນຖານ** ໃນການຄົ້ນຄິດ, ການວາງແຜນ, ການຕັດສິນໃຈ, ການປົກຄອງ ແລະການແກ້ໄຂບັນຫາເອົາເອງໃນການພັດທະນານັ້ນໆ.

ການທີ່ຊຸມຊົນ ຫຼືກຸ່ມເປົ້າໝາຍຈະມີສ່ວນຮ່ວມ ແລະກາຍເປັນເຈົ້າການໃນການພັດທະນາເອົາເອງໄດ້ ກໍຕໍ່ເມື່ອເຂົາເຈົ້າເຫັນໄດ້ຄວາມໝາຍ ຫຼືຜົນປະໂຫຍດຂອງການພັດທະນານັ້ນໆຕໍ່ວິຖີຊີວິດ ແລະຄວາມເປັນຢູ່ທີ່ດີຂຶ້ນຂອງເຂົາເຈົ້າມີໜ້ອຍ ຫຼືຫຼາຍພຽງໃດ ? ແລະສິ່ງສຳຄັນທີ່ສຸດກໍ່ຄືເຂົາເຈົ້າມີການຈັດຕັ້ງທີ່ແໜ້ນໜາ ແລະມີຜູ້ນຳທີ່ເຂັ້ມແຂງພຽງໃດທີ່ຈະນຳພາຂະບວນການດັ່ງກ່າວ.

ສະນັ້ນປະຖົມປັດໃຈອັນສຳຄັນ ໃນການພັດທະນາຊຸມຊົນແບບມີສ່ວນຮ່ວມກໍ່ຄື **ການພັດທະນາຄົນໃນຊຸມຊົນນັ້ນເອງ.**

## 2.1. ເປັນຫຍັງຈຶ່ງຕ້ອງມີຜູ້ນຳຊຸມຊົນ ຫຼື ກຸ່ມ

ໂດຍທົ່ວໄປ, ການພັດທະນາຊຸມຊົນຊົນນະບົດກໍ່ຄືການປັບປຸງປ່ຽນແປງໃນທາງທີ່ດີຂຶ້ນໂດຍຖືເອົາການມີສ່ວນຮ່ວມ ຫຼືການເປັນເຈົ້າການຂອງຊຸມຊົນ ຫຼືກຸ່ມເປົ້າໝາຍບ່ອນຈະພັດທະນານັ້ນໆ. (ເບິ່ງຮູບ.1.).






ຮູບ.4. ຂັ້ນຕອນ, ວິທີການປູກຈິດສຳນຶກ

## 7.6. ບົດບາດໜ້າທີ່ຂອງນັກສົ່ງເສີມ

ບົດບາດຂອງນັກສົ່ງເສີມກະສິກຳທີ່ສຳຄັນ ແລະສົມຄວນຕ້ອງປະຕິບັດກໍ່ຄື:

- ເປັນຜູ້ລະດົມຂົນຂວາຍ/ກະຕຸ້ນຊາວກະສິກອນໃຫ້ເກີດມີຄວາມຢາກພັດທະນາຖິ່ນເອງ
- ເປັນຜູ້ປະສານງານຊ່ວຍຊາວກະສິກອນ
- ເປັນນັກຝຶກອົບຮົມທີ່ດີ ແລະເກັ່ງ (ຫາກບໍ່ແມ່ນນັກຝອຍເກັ່ງ)
- ເປັນທີ່ປຶກສາໃຫ້ແກ່ຊາວກະສິກອນ ແລະອົງການຈັດຕັ້ງຕົ້ນສັງກັດ

ຈັດອັນດັບຄວາມສຳຄັນຂອງບັນຫາສຳລັບເຂົາ ແລະຄອບຄົວ. ສິ່ງໃດເປັນອັນໜັກໃຈກວ່າໝູ່ ແລະຕ້ອງການແກ້ໄຂໄວທີ່ສຸດ

- ເມື່ອຮັບຮູ້ເຖິງບັນຫາ ແລະຖານະແລ້ວພະຍາຍາມໂອ້ລົມເຖິງບັນຫາທີ່ເຂົາຈະແກ້ໄຂບັນຫາ ແລະປັບປຸງຖານະຢ່າງໃດ, ເຂົາເຄີຍແກ້ໄຂ ຫຼືບໍ່, ແກ້ສຳເລັດ ຫຼືບໍ່ສຳເລັດຍ້ອນອຸປະສັກອັນໃດແດ່
- ເວົ້າຈາອ້ອມຮອບໃຫ້ເຂົາເກີດຄວາມຮູ້ສຶກຢາກແກ້ບັນຫາ ແລະປັບປຸງຖານະຂອງເຂົາທີ່ປະເຊີນຢູ່ນັ້ນ, ເນັ້ນໃຫ້ເຂົາຢາກປັບປຸງຖານະຂອງເຂົາ, ໂດຍຜູ້ປູກຈິດສຳນຶກຕ້ອງໃຫ້ຂໍ້ມູນ ແລະທາງເລືອກຫຼາຍຂື້ນ. ຖ້າເຫັນວ່າເຂົາຍັງຖໍ້ຖອຍຢູ່ກໍ່ຕ້ອງໃຫ້ກຳລັງໃຈເຂົາ, ພະຍາຍາມໃຫເຂົາເກີດຄວາມຮູ້ສຶກວ່າຖ້າເຂົາຂາດຄວາມຮູ້ / ຂໍ້ມູນຂ່າວສານ ຫຼືຄວາມສຳນຶກໃນເລື້ອງດັ່ງທີ່ໄດ້ໂອ້ລົມໄປແລ້ວ ກໍ່ເປັນການຍາກສຳລັບເຂົາໃນການປັບປຸງຖານະ ແລະແກ້ບັນຫາຂອງເຂົາເອງ.

ເມື່ອເຫັນວ່າຊາວບ້ານຄົນນັ້ນ ຫຼືກຸ່ມນັ້ນເກີດຄວາມຢາກແກ້ບັນຫາ ແລະເຫັນວ່າບັນຫາກໍ່ມີຄວາມສຳຄັນກັບການສົ່ງເສີມທີ່ກຳລັງປະຕິບັດຢູ່, ນັກສົ່ງເສີມກໍ່ຄວນສືບຕໍ່ຮ່ວມກັບຊາວບ້ານແກ້ໄຂບັນຫາໂດຍໃຫ້ກຳແໜ້ນໃນຫຼັກການຂອງການຍອມຮັບເຕັກໂນໂລຍີ, ໝາຍຄວາມວ່າຕ້ອງເຮັດທຸກວິທີທາງໃຫ້ຊາວກະສິກອນເປົ້າໝາຍ.








ຮູບ.1. ການພັດທະນາແນໃສ່ຄົນເປັນສຳຄັນ

ດັ່ງໄດ້ກ່າວເທິງນີ້, ກ່ອນຊຸມຊົນຈະເປັນເຈົ້າການໃນການພັດທະນາ, ຈຳເປັນຕ້ອງມີຄວາມເຂົ້າໃຈ ແລະເຫັນໄດ້ຄວາມສຳຄັນ ແລະຜົນປະໂຫຍດຂອງການພັດທະນານັ້ນໆ ຕໍ່ຊີວິດການເປັນຢູ່ຂອງເຂົາເຈົ້າ, ຈຶ່ງຈຳເປັນຕ້ອງມີການຊຸກຍູ້_ສົ່ງເສີມ ແລະປຸກລະດົມຂົນຂວາຍ, ໃຫ້ຄຳແນະນຳ, ໃຫ້ຄວາມຮູ້ ແລະຄວາມເຂົ້າໃຈຢ່າງຈິງໃຈເປັນລະບົບ ແລະຕໍ່ເນື່ອງເພື່ອເຮັດໃຫ້ຂະບວນການພັດທະນາ ມີຄວາມໝັ້ນຄົງ ຫຼືເພື່ອເຮັດໃຫ້ຊຸມຊົນນັ້ນໆການເປັນເຈົ້າການເອົາເອງໄດ້ໂດຍພື້ນຖານຊຶ່ງພະນັກງານ ຫຼືນັກພັດທະນາຈະບໍ່ສາມາດຢູ່ຄຽງຂ້າງໄດ້ໂດຍຕະຫຼອດ. ເພາະສະນັ້ນ, ຈຶ່ງມີຄວາມຈຳເປັນຕ້ອງສ້າງໃຫ້ມີຜູ້ນຳຊຸມຊົນ ຫຼືວິຊາການບ້ານ, ກຸ່ມຜູ້ຜະລິດຕ່າງໆໃນການພັດທະນາເອົາເອງໃຫ້ໄດ້ ແລະລັດຈະພຽງແຕ່ໃຫ້ການສະໜັບສະໜູນຕາມເຫັນມີຄວາມຈຳເປັນເທົ່ານັ້ນ.

ການພັດທະນາໃດໆກໍຕາມ, ຖ້າປັດສະຈາກຜູ້ນຳຊຸມຊົນທີ່ດີ ແລະເຂັ້ມແຂງກໍຈະບໍ່ສາມາດພັດທະນາຊຸມຊົນຕົນໄປໄດ້ຢ່າງໝັ້ນຄົງເທົ່າທີ່ຄວນຈະເປັນທັງໆທີ່ມີຊັບພະຍາກອນທຳມະຊາດ ແລະບຸກຄະລາກອນທີ່ສາມາດຫຼວງຫຼາຍກໍຕາມ.

# 3. ໃຜຄືຜູ້ນຳຊຸມຊົນ

ຜູ້ນຳຊຸມຊົນຄືຜູ້ທີ່ສາມາດເຮັດໃຫ້ຜູ້ອື່ນໆ ໃນຊຸມຊົນປະຕິບັດຕາມທິດຄວາມຕ້ອງການ, ຄວາມຄິດ ແລະຄວາມຄາດຫວັງໂດຍທີ່ອາດບໍ່ໄດ້ຖືກແຕ່ງຕັ້ງ ເປັນຜູ້ນຳທາງການກໍໄດ້.



- ວິທີການພົວພັນສື່ສານທີ່ມີປະສິດທິພາບນັ້ນຄື: ການພົວພັນສື່ສານແບບສອງທາງ. ບັນດາເຕັກນິກ ຫຼືເຄື່ອງມືທີ່ກ່າວມານີ້ຈະເປັນພາຫານະພື້ນຖານຢ່າງໜຶ່ງທີ່ນຳເອົາເຕັກນິກວິຊາການ ທີ່ນັກສົ່ງເສີມຢາກຖ່າຍທອດໃຫ້ຊາວບ້ານເກີດມີປະສິດທິພາບຕົວຈິງ ແລະຊາວບ້ານກໍ່ຈະສາມາດຮຽນຮູ້ໄດ້ຈິງໆ. ເຮັດໄດ້ແນວນີ້ຊາວໄຮ່ນາ (ກຸ່ມເປົ້າໝາຍ) ຈຶ່ງຈະເກີດມີຄວາມກະຕືລືລົ້ນຢາກເຮັດຢາກໃຊ້, ຢາກຮຽນຮູ້ ແລະຍອມຮັບເອົາເຕັກໂນໂລຢີໄປໃຊ້ຈິງໆ, ໃນທີ່ສຸດເປົ້າໝາຍຂອງການສົ່ງເສີມກໍ່ບັນລຸໄດ້.
- ຢ່າງທີສອງ, ການທີ່ຈະເຮັດໃຫ້ຄົນຢາກເຮັດຢາກປະຕິບັດຈິງ, ນັກສົ່ງເສີມຕ້ອງຮັບຮູ້ພື້ນຖານໃນການປູກຈິດສຳນຶກຂອງຕົນ, ອັນຈະເປັນພື້ນຖານໃຫ້ແກ່ເຂົາໄດ້ຄົ້ນຄິດຫາວິທີການແກ້ໄຂບັນຫາ ແລະວິທີການປະຕິບັດຕົວຈິງ.

### 7.5.2. ວິທີການປູກຈິດສຳນຶກ

ການປູກຈິດສຳນຶກຂອງຄົນປະກອບມີ 5 ຂັ້ນຕອນພື້ນຖານ:

- ໂອ້ລົມເຖິງບັນຫາ ແລະສາຍເຫດບັນຫານຂອງເຂົາ, ຄອບຄົວແລະເພື່ອນມິດຂອງເຂົາ
- ໂອ້ລົມເຖິງຖານະທາງເສດຖະກິດ, ສັງຄົມຂອງເຂົາ ແລະຄອບຄົວຂອງເຂົາ, ສາຍເຫດທີ່ເຮັດໃຫ້ເຂົາ ແລະ ຄອບຄົວມີຖານະເຊັ່ນນັ້ນ
- ໃນການໂອ້ລົມເຖິງບັນຫາ ຫຼືສາຍເຫດປົກກະຕິຊາວບ້ານຈະຍົກຂຶ້ນມາຫຼາຍຢ່າງພ້ອມໆກັນ, ຊຶ່ງເປັນເລື້ອງທຳມະດາ. ສຳຄັນນັກສົ່ງເສີມ (ຜູ້ປູກຈິດສຳນຶກ) ຕ້ອງຈົດຈຳ / ຈົດກ່າຍ ແລ້ວພະຍາຍາມກະຕຸ້ນໃຫ້ເຂົາ

ຄວາມຮູ້ພື້ນຖານ ແລະຈຳເປັນເພື່ອທີ່ພະນັກງານເມືອງ ຈະກ້າວໄປສູ່ການກໍ່ໃຫ້ເກີດສັດທາຈາກປະຊາຊົນນັ້ນປະກອບມີ:

- ຮູ້ການສົ່ງເສີມມີເປົ້າໝາຍທີ່ສຳຄັນອັນໃດມີຄວາມສອດຄ່ອງກັບນະໂຍບາຍລວມຂອງລັດຖະບານອັນໃດ. ນອກນັ້ນກໍ່ຕ້ອງຮູ້ຄວາມຕ້ອງການຂອງກຸ່ມເປົ້າໝາຍໃນ ການສົ່ງເສີມແຕ່ລະກຸ່ມມີອັນໃດ ?
- ຮູ້ລະບົບການຝຶກອົບຮົມ (ເລີ່ມແຕ່ການຫາ TNA ຂອງກຸ່ມເປົ້າໝາຍ, ກຳນົດຫຼັກສູດ, ຂັ້ນຕອນ ແລະເຕັກນິກວິທີການຝຶກຕົວຈິງ)
- ຮູ້ລະບົບການປະສານງານຢ່າງຄ່ອງຕົວ
- ຮູ້ໃຊ້ການສະໜັບສະໜຸນ
- ຮູ້ລະບົບການຊຸກຍູ້ ຕິດຕາມ ແລະປະເມີນຜົນ
- ຮູ້ຈັດຫາຂໍ້ມູນຂ່າວສານເພື່ອຕອບສະໜອງທຸກຝ່າຍທີ່ກ່ຽວຂ້ອງ
- ມີລະບົບແບບແຜນຢ້ຽມຢາມປະຊາຊົນຢ່າງຕໍ່ເນື່ອງ ແລະທັນເຫດການ

ສ່ວນການປະຕິບັດວຽກງານຕົວຈິງ ຮ່ວມກັບຊາວບ້ານຈະເປັນໃນຊ່ວງການສຶກສາ ແລະ ກຽມ / ກຳນົດກຸ່ມເປົ້າໝາຍ, ຊ່ວງໄລຍະດຳເນີນການຝຶກອົບຮົມ, ຊ່ວງໄລຍະຕິດຕາມ ແລະປະເມີນຜົນກໍ່ດີ, ຢາກໃຫ້ກຸ່ມເປົ້າໝາຍ ຫຼືຊາວກະສິກອນໄດ້ເກີດການຮຽນຮູ້ເຕັກນິກວິຊາການໃໝ່ທີ່ດີ, ສາມາດນຳໄປໃຊ້ໄດ້ນັ້ນ, ນັກສົ່ງເສີມ / ພັດທະນາຕ້ອງໄດ້ຮູ້ວິທີການເຮັດວຽກກັບຊາວກະສິກອນໃຫ້ໜັກແໜ້ນ (ເລີ່ມແຕ່ການຮຽນຮູ້ກ່ຽວກັບໝູ່ບ້ານ, ຮີດຄອງປະເພນີການເຊື່ອຖື, ການທຳມາຫາກິນ ແລະການຢູ່ຮ່ວມສຳພັນຂອງຊາວບ້ານດ້ວຍກັນ). ບໍ່ພຽງແຕ່ເທົ່ານັ້ນ, ເຄື່ອງມືສຳຄັນອີກຢ່າງໜຶ່ງສຳລັບນັກສົ່ງເສີມກໍ່ຄື:



## 3.1. ປະເພດຜູ້ນຳຊຸມຊົນ

ຫຼາຍຄົນຈະມີຄວາມສາມາດບົ່ມຊ້ອນ ໃນການພັດທະນາໃຫ້ກາຍເປັນຜູ້ນຳຊຸມຊົນທີ່ດີໄດ້, ຖ້າເຂົາເລົ່ານັ້ນເຂົ້າໃຈແຈ້ງໃນຄວາມໝາຍ ແລະຄຸນລັກສະນະພື້ນຖານຂອງຜູ້ນຳຊຸມຊົນ / ກຸ່ມ. ຮູ້ບົດບາດໜ້າທີ່ ແລະວິທີການປະຕິບັດອັນຈະແຈ້ງ.

ສະນັ້ນ, ຜູ້ນຳຊຸມຊົນ ຫຼື ກຸ່ມ ຈຶ່ງມີຫຼາກຫຼາຍປະເພດ ແລະຫຼາຍລະດັບ: ຜູ້ນຳຊຸມຊົນພັດທະນາໝູ່ບ້ານ, ຜູ້ນຳທາງສາດສະໜາ, ຜູ້ນຳກຸ່ມໃຊ້ນ້ຳ, ຜູ້ນຳກຸ່ມລ້ຽງສັດ, ຫົວໜ້າກຸ່ມປູກໝາກໂມ, ໝາກແຕງ ແລະອື່ນໆ... ແລະສຳຄັນທີ່ສຸດກໍ່ຄືທຸກຄົນສາມາດກາຍເປັນທັງຜູ້ນຳ ແລະຜູ້ຖືກນຳໃນເວລາດຽວກັນໄດ້ເຊັ່ນ: ຜູ້ນຳກຸ່ມໃຊ້ນ້ຳອາດຈະເປັນຜູ້ຖືກນຳ (ສະມາຊິກ) ໃນດ້ານການປົກຄອງ ແລະດ້ານການຜະລິດອື່ນໆ ກໍ່ໄດ້ໃນຊຸມຊົນນັ້ນໆ.

## 3.2. ຄວາມເຂົ້າໃຈກ່ຽວກັບວິຊາການບ້ານ

ວິຊາການບ້ານ: ແມ່ນຊາວກະສິກອນໃດໜຶ່ງ ທີ່ມີຄວາມກະຕືລືລົ້ນ, ຕື່ນຕົວນຳເອົາເຕັກນິກວິຊາການຜະລິດແບບໃໝ່ໄປຜັນຂະຫຍາຍນຳໃຊ້ເພື່ອປັບປຸງແບບແຜນການຜະລິດຂອງຕົນໃຫ້ດີຂື້ນເປັນກ້າວໆ, ເປັນຜູ້ທີ່ມີຄວາມສາມາດໃນການສັງລວມຖອດຖອນບົດຮຽນຈາກພຶດຕິກຳການນຳໃຊ້ເຕັກນິກຕ່າງໆ ເພື່ອຜັນຂະຫຍາຍຖ່າຍທອດໃຫ້ແກ່ຜູ້ອື່ນໃນຊຸມຊົນຂອງຕົນຈົນໃນທີ່ສຸດເກີດການຍອມຮັບທັງພາຍໃນ ແລະພາຍນອກຊຸມຊົນ_ ເຂົາຜູ້ນັ້ນກໍ່ແມ່ນຜູ້ນຳຊຸມຊົນດ້ານວິຊາການໃດໜຶ່ງເໝືອນກັນ.

ການມີຄົນທີ່ມີແວວເປັນຜູ້ນຳ ແຕ່ລະດ້ານໃນຊຸມຊົນ ຫຼື ກຸ່ມຫຼາຍເທົ່າໃດກໍ່ຍິ່ງດີເທົ່ານັ້ນ, ຫາກຮູ້ຈັກເຂົາເຈົ້າເລົ່ານັ້ນ ແລະຮູ້ຈັກນຳໃຊ້ເຂົາເຈົ້າໂດຍການແບ່ງໜ້າທີ່ກັນຢ່າງຈະແຈ້ງທັງຮູ້ສົ່ງເສີມຄວາມເປັນຜູ້ນຳຂອງແຕ່ລະຄົນໃຫ້ຈະເລີນກ້າວໜ້າໄດ້.

**3.2.1.ໂດຍທົ່ວໄປຜູ້ນຳຊຸມຊົນສາມາດຈັດເປັນ 3 ປະເພດໃຫຍ່ໆຄື:**

- ຜູ້ນຳທາງການ: ອັນໄດ້ແກ່ຜູ້ນຳທີ່ຖືກແຕ່ງຕັ້ງ ຫຼື ຖືກເລືອກຕັ້ງຢ່າງເປັນທາງການເຊັ່ນ: ຫົວໜ້າເຂດ, ນາຍບ້ານ, ນາຍຄູ, ນາຍໝໍບ້ານ...
- ຜູ້ນຳບໍ່ເປັນທາງການ: ອັນໄດ້ແກ່ຜູ້ມີອິດທິພົນ ໃນການຕັດສິນໃຈໃດໜຶ່ງທີ່ສຳຄັນ ຢູ່ໃນເຂດຊຸມຊົນນັ້ນບໍ່ແມ່ນຜູ້ນຳທາງການແຕ່ຢ່າງໃດເຊັ່ນ: ຜູ້ມີຖານະດີທາງດ້ານເສດຖະກິດ (ເປັນຜູ້ມັກໃຫ້ການສະໜັບສະໜູນທຶນແກ່ສ່ວນລວມດີສົມຄວນ), ເຖົ້າແກ່, ແມວໂຮມ, ເຈົ້າກົກ, ເຈົ້າເລົ່າ, ອະດີດຜູ້ນຳທາງການ, ພະສົງ ຫຼືນັກບວດ...
- ຜູ້ນຳດ້ານວິຊາການຊຸມຊົນ: ອັນໄດ້ແກ່ຜູ້ສຳນິສຳນານ ຫຼືມີຄວາມຮູ້, ຄວາມສາມາດດ້ານວິຊາການສູງຢູ່ໃນຊຸມຊົນ ຜູ້ມີອິດທິພົນໃນການພັດທະນາດ້ານເສດຖະກິດໃນຊຸມຊົນພໍສົມຄວນເຊັ່ນ: ຫົວໜ້າກຸ່ມຜະລິດໃດໜຶ່ງ, ບຸກຄົນທີ່ມີສີມືໃນການລ້ຽງປາ, ຊ່າງຕີເຫຼັກ, ປັ້ນໝໍ້, ຊ່າງໄມ້, ຜູ້ເກັ່ງຕ່ຳຫູກທໍໃໝ.





**ຈ. ຂັ້ນຕອນປະສານຂະຫຍາຍບົດຮຽນ**

- ປະສານກັບອຳນາດການປົກຄອງບ້ານ, ອົງການຈັດຕັ້ງທີ່ກ່ຽວຂ້ອງເພື່ອໃຫ້ໄດ້ມີການຂະຫຍາຍ, ເຜີຍແຜ່ບົດຮຽນວິຊາການບ້ານເຮັດໄດ້
- ກຳນົດເງື່ອນໄຂສະໜັບສະໜູນຕ່າງໆຈາກພາກລັດ, ອົງການຈັດຕັ້ງປົກຄອງໃນຊຸມຊົນເອງ ເພື່ອເຮັດໃຫ້ວິຊາການບ້ານເຫຼົ່ານັ້ນມີຖານະທາງສັງຄົມໃນໂຄງສ້າງອຳນາດການປົກຄອງແທ້ໆ (ໝາຍວ່າອຳນາດການປົກຄອງຮັບຮູ້, ສະໜັບສະໜູນ, ຖືເປັນສ່ວນໜຶ່ງຂອງວຽກງານການຄຸ້ມຄອງການຜະລິດຂອງບ້ານ)
- ຊຸກຍູ້, ກະຕຸ້ນໃຫ້ວິຊາການບ້ານເຫຼົ່ານັ້ນໄດ້ມີໂອກາດເຜີຍແຜ່, ຂະຫຍາຍກິດຈະກຳ ແລະຄວາມຮູ້ອອກໄປສູ່ຄົນອື່ນເລື້ອຍໆ

ທີ່ກ່າວໄປຂ້າງເທິງນີ້ເປັນພຽງຫຼັກການ ແລະສິ່ງທີ່ຂຽນໃນແຜ່ນເຈ້ຍໃຫ້ອ່ານ. ຖ້າຫາກຂາດການຝຶກຝົນປະຕິບັດຕົວຈິງໂດຍມີການສະຫຼຸບຖອດຖອນບົດຮຽນປັບປຸງແລ້ວ, ແນ່ນອນຈະບໍ່ເກີດປະໂຫຍດແກ່ກຸ່ມເປົ້າໝາຍ ແລະ ອົງການຈັດຕັ້ງພວກເຮົາແຕ່ຢ່າງໃດ, ເພາະບໍ່ມີຕຳລາໃດໃນໂລກທີ່ສົມບູນແບບ ແລະ ເໝາະສົມທຸກສະຖານະການ ແລະ ຍຸກສະໄໝ, ສຳຄັນພວກເຮົາສາມາດກຳນົດ ແລະຮັບຮູ້ສິ່ງທີ່ເໝາະສົມກັບທ່າແຮງຂອງພວກເຮົາ.

ຢາກໃຫ້ການລົງມືປະຕິບັດວຽກງານກໍ່ສ້າງພັດທະນາວິຊາການບ້ານ / ຄອບຄົວຕົວ ແບບເກີດມີປະສິດທິພາບ ແລະຮັບປະກັນໄດ້ຄວາມຍືນຍົງນັ້ນ, ພະນັກງານຜູ້ທີ່ເຮັດໜ້າທີ່ສົ່ງເສີມວຽກງານດັ່ງກ່າວ, ຈະຕ້ອງມີທັດສະນະຫຼັກໝັ້ນໃນວຽກງານ ດັ່ງກ່າວດີພ້ອມທັງກຳແໜ້ນບົດຮຽນ ຫຼື ຄວາມຮູ້ທີ່ສຳຄັນດັ່ງຈະໄດ້ກ່າວຕໍ່ໄປນີ້:

ຊີລາຍຊື່ບຸກຄົນທີ່ຈະສ້າງໃຫ້ເປັນວິຊາການບ້ານ, ຂັ້ນຕອນວິທີການປະຕິບັດ ແຕ່ລະກິດຈະກຳຢ່າງໃດ ?, ເງື່ອນໄຂປັດໃຈສະໜັບສະໜຸນຈາກແຕ່ລະ ຝ່າຍມີຢ່າງໃດ ?

## ຄ. ຂັ້ນຕອນໃຫ້ຄວາມຮູ້

- ຈັດຕັ້ງປະຕິບັດການຝຶກອົບຮົມໃຫ້ບັນດາບຸກຄົນເປົ້າໝາຍຢ່າງເຈາະຈົງຕາມແຕ່ລະດັບທີ່ເຫັນວ່າຕ້ອງໃຫ້. ກໍລະນີບຸກຄົນໃດທີ່ເຮັດການຜະລິດເກັ່ງແລ້ວ, ທັນສົມຄວນແຕ່ຕ້ອງໄດ້ຜັນຂະຫຍາຍບົດຮຽນໄປສູ່ວົງກວ້າງກໍ່ໃຫ້ຄວາມຮູ້ໃນການຖ່າຍທອດບົດຮຽນໃຫ້ແກ່ເຂົາເຈົ້າດ້ານນັ້ນ
- ວາງແຜນຮ່ວມກັບບຸກຄົນເປົ້າໝາຍເພື່ອນຳເອົາບົກຮຽນໄປນຳໃຊ້ເຂົ້າໃນກິດຈະກຳຕົວຈິງ
- ຕິດຕາມການປະຕິບັດກິດຈະກຳ ແລະໃຫ້ຄຳແນະນຳຢ່າງເປັນປະຈຳຕະຫຼອດຊ່ວງລະດູການຜະລິດ

## ງ. ຂັ້ນຕອນປະເມີນຜົນ

- ຮ່ວມກັນກັບບຸກຄົນເປົ້າໝາຍເຫຼົ່ານັ້ນປະເມີນຜົນການນຳໃຊ້ເຕັກໂນໂລຍີຜ່ານມາເປັນຢ່າງໃດ, ມີສິ່ງໃດຕ້ອງແກ້ໄຂ ແລະແກ້ໄຂແນວໃດ ? ໃຜຕ້ອງແກ້ ?
- ກຳນົດບົດຮຽນອັນໃດຄວນໄດ້ຜັນຂະຫຍາຍຮ່ວມກັນ ແລະວິທີຜັນຂະຫຍາຍແບບໃດ ?



# 4. ບົດບາດ ແລະໜ້າທີ່ພື້ນຖານຂອງຜູ້ນຳຊຸມຊົນ

ໂດຍພື້ນຖານແລ້ວຜູ້ນຳຊຸມຊົນ ຫຼືຜູ້ນຳກຸ່ມທີ່ດີຄວນມີບົດບາດ ໜ້າທີ່ທີ່ສຳຄັນຄື:

- ເປັນຜູ້ຊອກຮູ້, ຄິດຄົ້ນ, ວິເຄາະວິໄຈບັນຫາທີ່ກ່ຽວຂ້ອງກັບຊຸມຊົນຕົນເຮັດໃຫ້ທຸກຄົນໃນຊຸມຊົນເຫັນໄດ້ບັນຫາດັ່ງກ່າວ ແລ້ວນຳພາຄົ້ນຄິດຫາວິທີທາງແກ້ໄຂບັນຫາເປັນເອກະພາບເພື່ອກຸ້ມຕົນເອງ, ເພິ່ງຕົນເອງໃຫ້ໄດ້ຂອງຊຸມຊົນ
- ເປັນຜູ້ນຳພາໃນການວາງແຜນຈັດຕັ້ງປະຕິບັດແນວວິທີແກ້ໄຂທີ່ເປັນເອກະພາບແລ້ວນັ້ນ
- ເປັນຜູ້ປະສານງານກັບໜ່ວຍງານລັດ, ເອກະຊົນ ແລະອຳນາດການປົກຄອງກ່ຽວຂ້ອງເພື່ອດຶງດູດການສະໜັບສະໜຸນຕາມຄວາມຈຳເປັນ
- ເປັນຜູ້ຊີ້ນຳ ນຳພາການຈັດຕັ້ງປະຕິບັດແຜນການແກ້ໄຂບັນຫາຕ່າງໆ (ຄວບຄຸມຊຸກຍູ້ ແລະປະເມີນຜົນພ້ອມຫາທາງແກ້ໄຂບັນຫາໃນໄລຍະປະຕິບັດງານຂອງສະມາຊິກຕະຫຼອດເວລາ)

ນອກຈາກບົດບາດໜ້າທີ່ດັ່ງກ່າວເທິງນີ້ແລ້ວ, ຜູ້ນຳຊຸມຊົນ ຫຼືກຸ່ມຍັງຕ້ອງເປັນເໝືອນສູນລວມນ້ຳໃຈຂອງທຸກຄົນໃນຊຸມຊົນດ້ວຍ ແລະທັງເຮັດໜ້າທີ່ອື່ນຕາມເໝາະສົມອີກ. ຜູ້ນຳຊຸມຊົນໂດຍແທ້ກໍ່ບໍ່ຈຳເປັນຕ້ອງຖືກແຕ່ງຕັ້ງເປັນທາງການໂດຍອຳນາດລັດແຕ່ຢ່າງໃດ, ຫາກຈະຖືກຍອມຮັບນັບຖືຈາກຊຸມຊົນນັ້ນດ້ວຍຄວາມຈິງໃຈ.

# 5. ວິທີຄັດເລືອກ ແລະສ້າງຜູ້ນໍາຊຸມຊົນ

## 5.1. ເປົ້າໝາຍການຄັດເລືອກ ແລະສ້າງຜູ້ນໍາຊຸມຊົນ

ເປົ້າໝາຍຕົ້ນຕໍໃນການຄັດເລືອກ ຫຼືເລືອກເຟັ້ນ ແລະສ້າງຜູ້ນໍາ ຊຸມຊົນກໍຄືເພື່ອເປັນການເລືອກເຟັ້ນຊອກເຫັນຜູ້ນໍາຊຸມຊົນທີ່ດີ ແລະເກັ່ງທີ່ສຸດໃນຊຸມຊົນເພື່ອໃຫ້ກາຍເປັນຜູ້ນໍາຊຸມຊົນ ເພື່ອໃຫ້ກາຍເປັນຜູ້ນໍາຂະບວນການພັດທະນາໃນຊຸມຊົນນັ້ນໆ ໄດ້ຢ່າງໝັ້ນຄົງອັນເປັນຫົວໃຈຂອງການພັດທະນາແບບມີສ່ວນຮ່ວມນັ້ນເອງ. ການມີຜູ້ນໍາຊຸມຊົນທີ່ບໍ່ດີບໍ່ເໝາະສົມຍ້ອນບໍ່ໄດ້ມີການຄັດເລືອກຈິງຈັງຖືເບົາການເລືອກເຟັ້ນກໍ່ຈະເປັນການຖ່ວງດຶງຄວາມຈະເລີນກ້າວໜ້າຂອງຊຸມຊົນ ຫຼືອາດນໍາໄປສູ່ຄວາມຈິບຫາຍ, ຫຼົ້ມຈົມກໍ່ເປັນໄດ້ດັ່ງຄືກັບນິທານ "ກົບເລືອກນາຍ"



ຮູບ.2. ການເລືອກເຟັ້ນຜູ້ນໍາບໍ່ດີ ຫຼືຖືເບົາກໍຈະເປັນແບບນີ້ " ນາຍທີ່ສອນໜ້າກາກ ແລະເສື້ອເກາະ "



ຢາກສ້າງ / ພັດທະນາໃຫ້ເປັນວິຊາການບ້ານ

- ກໍານົດຫຼັກສູດ ແລະວາງແຜນການຝຶກ, ການຊຸກຍູ້ສະໜັບສະໜູນແກ່ບຸກຄົນເປົ້າໝາຍເຫຼົ່ານັ້ນ

## ຂ. ຂັ້ນຕອນລະດົມ

- ຊີ້ແຈງໃຫ້ບຸກຄົນເປົ້າໝາຍເຫັນໄດ້ຄວາມໝາຍຄວາມສໍາຄັນຂອງ ການມີວິຊາການບ້ານໃນພື້ນຖານການຜະລິດ, ຜົນປະໂຫຍດຂອງ ການເປັນວິຊາການບ້ານຕໍ່ຖານະຄອບຄົວ ແລະຕົນເອງມີຢ່າງໃດ, (ພະຍາຍາມຫຼີກເວັ້ນການໃຫ້ຄໍາໝັ້ນສັນຍາໃດໆ), ຜົນປະໂຫຍດທີ່ມີຕໍ່ຊຸມຊົນ ແລະສັງຄົມໂດຍລວມມີຢ່າງໃດ?, ເປັນການຕອບສະໜອງນະໂຍບາຍລວມຂອງລັດຢ່າງໃດ ?
- ໃນຂະນະດຽວກັນນີ້ຕ້ອງໄດ້ມີການປະສານອໍານາດການປົກຄອງບ້ານ, ເມືອງ ແລະການຈັດຕັ້ງມະຫາຊົນຕ່າງໆໃຫ້ຮັບຮູ້ ຫຼືຊ່ວຍລະດົມແຕ່ຫົວທີໂລດ, ທັງນີ້ກໍ່ເພື່ອໃຫ້ທຸກຝ່າຍມີຄວາມພ້ອມພຽງເຮັດເພື່ອຊຸມຊົນຂອງຕົນເອງ
- ຊີ້ແຈງບົດບາດໜ້າທີ່ ຂອງວິຊາການທີ່ຕ້ອງໄດ້ປະຕິບັດມີສິ່ງໃດ?; ຜູ້ສົ່ງເສີມເອງມີຢ່າງໃດ? ຈົນໃຫ້ທຸກຝ່າຍຍອມຮັບ ແລະດ້ວຍຄວາມສະໝັກໃຈແທ້
- ປະສານອໍານາດການປົກຄອງບ້ານແລະອົງການຈັດຕັ້ງທີ່ກ່ຽວຂ້ອງ (ຫ້ອງການ ກປ ເມືອງ ຫຼືພະແນກ ກປ ແຂວງ ແລະອື່ນໆຖ້າຈໍາເປັນ) ເພື່ອໃຫ້ເກີດການຮັບຮູ້ຢ່າງເປັນທາງການຈາກທຸກຝ່າຍກ່ຽວກັບຈຸດປະສົງ / ລະດັບຄາດໝາຍ ໃນການສ້າງວິຊາການບ້ານແຕ່ລະດ້ານ, ບັນ

- ໃນຂັ້ນຕອນທີ 4
    * ຄວາມຄິດເຫັນຂອງກຸ່ມເປົ້າໝາຍຕໍ່ເຕັກໂນໂລຢີທີ່ໄດ້ນຳໃຊ້
    * ບົດຮຽນທີ່ຖອດຖອນໄດ້ ແລະ ນຳເຜີຍແຜ່ແກ່ຊາວນາຄົນອື່ນໆ ທີ່ມີຄວາມສົນໃຈ
    * ສ້າງແຜນການຂະຫຍາຍ / ປັບປຸງໃນລະດູການຜະລິດຕໍ່ມາ

ທີ່ກ່າວມາຂ້າງເທິງນັ້ນແມ່ນເປັນການເຮັດໃຫ້ ເຕັກໂນໂລຢີອັນໃໝ່ຖືກນຳໃຊ້ ແລະແຜ່ຂະຫຍາຍກວ້າງໃນພື້ນຖານການຜະລິດ. ສ່ວນເປົ້າໝາຍຂອງການສ້າງວິຊາການກໍ່ແມ່ນເພື່ອນຳເອົາເຕັກໂນໂລຢີອັນໃໝ່ກ້າວໜ້າລົງສູ່ຮາກຖານການຜະລິດເໝືອນກັນ, ແຕ່ຕ້ອງໃຫ້ເຂົາເຈົ້າເປັນຕົວແທນໃນການຈັດຕັ້ງປະຕິບັດການກະຈາຍເຕັກໂນໂລຢີໃນຊຸມຊົນເອງ ແລະກໍ່ຮັບປະກັນໄດ້ຄວາມຍືນຍົງດ້ວຍ. ເພາະສະນັ້ນ, ການພັດທະນາປັບປຸງວິຊາການຕ້ອງເລີ່ມຈາກຂັ້ນຕອນທີ່ຈະໄດ້ກ່າວຕໍ່ໄປນີ້:

### 7.5.1. ຂັ້ນຕອນການສ້າງວິຊາການບ້ານ
### ກ. ຂັ້ນຕອນສຶກສາ

- ສຳຫຼວດທ່າແຮງຂອງເຂດ / ບ້ານເປົ້າໝາຍທີ່ຢາກໃຫ້ເກີດມີວິຊາການບ້ານແລ້ວກຳນົດ, ຄັດເລືອກເອົາບຸກ ຄົນເປົ້າໝາຍ
- ສຶກສາທ່າແຮງຂອງແຕ່ລະບຸກຄົນທີ່ເປັນເປົ້າໝາຍ ແລະ TNA
- ກຳນົດປະເພດວິຊາການບ້ານທີ່ຕ້ອງສ້າງ (ວິຊາການບ້ານດ້ານໃດ ? ປູກຝັງ, ລ້ຽງສັດ ຫຼືການຈັດການບໍລິຫານກຸ່ມ, ການແຈກຢາຍນ້ຳ). ແລ້ວແຕ່ສະພາບ, ທ່າແຮງຂອງທ້ອງຖິ່ນ ແລະບຸກຄົນ \ ເປົ້າໝາຍທີ່



### 5.2. ວິທີການເລືອກເຟັ້ນຊອກຫາຜູ້ນຳ

ມີຫຼາຍວິທີຈະເຮັດໃຫ້ ຜູ້ນຳຊຸມຊົນພົ້ນເດັ່ນຂຶ້ນ ເພື່ອໃຫ້ກາຍເປັນຜູ້ນຳໄດ້. ແຕ່ມີບາງວິທີການທີ່ພະນັກງານສົ່ງເສີມ ຫຼືນັກພັດທະນາຊຸມຊົນຄວນເອົາໃຈໃສ່ນຳໄປປະຕິບັດໄດ້ເຊັ່ນ:

- ການສຶກສາວິເຄາະປະຫວັດ, ພຶດຕິກຳທີ່ສະແດງອອກໃນລັກສະນະຜູ້ນຳຢູ່ໃນຊຸມຊົນນັ້ນໆ ແລະຟັງສຽງນຳຊຸມຊົນໃຫ້ກວ້າງຂວາງ ໂດຍສະເພາະເຖົ້າແກ່, ອາວຸໂສ, ຜູ້ມີອິດທິພົນຢູ່ໃນທ້ອງຖິ່ນ ແລະຜູ້ນຳຊຸມຊົນທີ່ມີຢູ່ແລ້ວ...
- ສ້າງກິດຈະກຳທີ່ເປັນໂອກາດໃຫ້ມີການສະແດງອອກຂອງຜູ້ມີແວວໃນການເປັນຜູ້ນຳທີ່ບົ່ມຊ້ອນຢູ່ໃນຊຸມຊົນ ແລະທຳຄວາມຮູ້ຈັກສຶກສາຜູ້ກ່ຽວໃຫ້ເລິກເຊິ່ງ
- ສືບຫາ ຫຼືເກັບກຳຂໍ້ມູນມືສອງຈາກອົງການ ຫຼືໜ່ວຍງານລັດທີ່ເຄີຍໄດ້ໄປສົ່ງເສີມ ຫຼືໄດ້ເຄີຍສ້າງຜູ້ນຳຊຸມຊົນມາກ່ອນ (ຖ້າມີ) ພ້ອມຖາມຂໍ້ຄິດເຫັນຕໍ່ຜູ້ນຳດັ່ງກ່າວດ້ວຍ
- ການສຶກສາຜູ້ນຳທີ່ຖືກແຕ່ງຕັ້ງ / ເລືອກຕັ້ງ ຫຼືທີ່ມີຢູ່ແລ້ວ ເພື່ອເພີ່ມຂີດຄວາມຮູ້, ຄວາມສາມາດ ໃຫ້ເປັນທີ່ສັດທາຂອງຊຸມຊົນເປັນສ່ວນຫຼາຍ

## 5.3. ວິທີສົ່ງເສີມ ແລະ ພັດທະນາຜູ້ນຳຊຸມຊົນ

ການສົ່ງເສີມ ແລະການພັດທະນາຜູ້ນຳຊຸມຊົນທີ່ໄດ້ເລືອກເຟັ້ນມາ ແລ້ວນັ້ນກໍ່ມີຫຼາຍວິທີເຊັ່ນກັນ ແຕ່ວິທີການທີ່ຄວນປະຕິບັດກໍ່ຄື:

- ໃຫ້ຄວາມຮູ້ ແລະຄວາມເຂົ້າໃຈເພີ່ມຕື່ມກ່ຽວກັບຄວາມໝາຍຄວາມ ສຳຄັນ ແລະບົດບາດໜ້າທີ່ ຂອງການເປັນຜູ້ນຳຊຸມຊົນຕໍ່ຜູ້ນຳທີ່ເລືອກເຟັ້ນແລ້ວນັ້ນ.
- ສົ່ງເສີມໃຫ້ຜູ້ນຳດັ່ງກ່າວໄດ້ຄົ້ນຄິດຫາແນວວິທີແກ້ໄຂບັນຫາ ແລະນຳພາຈັດຕັ້ງປະຕິບັດແຜນການພັດທະນາ / ແກ້ໄຂບັນຫາຂອງຊຸມຊົນ ເພື່ອໃຫ້ເຂົາເຈົ້າໄດ້ມີໂອກາດນຳພາ ແລະເລັ່ມມີບົດບາດພົ້ນເດັ່ນຕໍ່ຊຸມຊົນຫຼາຍຂຶ້ນຈົນເປັນທີ່ຍອມຮັບຂອງຊຸມຊົນເທື່ອລະກ້າວ.
- ສ້າງກົນໄກເພື່ອເອື້ອອຳນວຍ ແລະເປັນແຮງຈູງໃຈໃຫ້ແກ່ຜູ້ນຳຊຸມຊົນເພື່ອໃຫ້ເຂົາເຈົ້າມີກຳລັງໃຈໃນການຈະກ້າວໄປເປັນຜູ້ນຳຊຸມຊົນຢ່າງເຕັມທີ່ໄດ້ເຊັ່ນ: ການໃຫ້ການຝຶກອົບຮົມເປັນພິເສດ, ການນຳພາໄປທັດສະນະສຶກສາເປີດຄວາມຄິດ_ຄວາມຮູ້ໃຫ້ກວ້າງຂວາງ, ໃຫ້ການຍ້ອງຍໍຊົມເຊີຍ ຫຼືບຳເນັດຕາມເໝາະສົມ ແລະອື່ນໆ.
- ນັກພັດທະນາ ຫຼືນັກສົ່ງເສີມຄວນເຮັດໜ້າທີ່ເປັນຜູ້ອຳນວຍການຮຽນຮູ້ ຫຼືເປັນທີ່ປຶກສາໃຫ້ແກ່ຜູ້ນຳເຫຼົ່ານັ້ນ, ໂດຍສະເພາະໃນໄລຍະຕົ້ນໆຈົນກວ່າເຂົາເຈົ້າຈະມີຄວາມໝັ້ນໃຈ, ເປັນທີ່ຍອມຮັບຢ່າງກວ້າງຂວາງ.



ຜົນຮັບສຳຄັນທີ່ຄວນໄດ້ຮັບຈາກການປະຕິບັດແຕ່ລະຂັ້ນຕອນຂອງການສົ່ງເສີມ ຢ່າງໜ້ອຍຄວນປະກອບມີ:

- **ໃນຂັ້ນຕອນທີ 1**
  * ບັນຫາທີ່ຊາວບ້ານກຳນົດໄດ້
  * ສາຍເຫດ ແລະແນວວິທີແກ້ໄຂ
    _ດ້ວຍການຝຶກ
    _ດ້ວຍວິທີອື່ນໆ
  * ກຳນົດໄດ້ເປົ້າໝາຍໃນແຕ່ລະກິດຈະກຳສົ່ງເສີມ

- **ໃນຂັ້ນຕອນທີ 2**
  * ກຸ່ມເປົ້າໝາຍຄວາມອາດສາມາດໃນການນຳໃຊ້ເຕັກໂນໂລຢີໃໝ່ທີ່ຖ່າຍທອດໃຫ້
  * ກຸ່ມເປົ້າໝາຍມີກິດຈະກຳໂດຍນຳເອົາສິ່ງທີ່ຮຽນຮູ້ໄປລອງປະຕິບັດໃນເນື້ອທີ່ການຜະລິດຂອງຕົນ

- **ໃນຂັ້ນຕອນທີ3**
  * ຕີລາຄາໄດ້ຂະບວນການນຳໃຊ້ເຕັກໂນໂລຢີຂອງກຸ່ມເປົ້າໝາຍ
  * ມີ ແລະ ໃຫ້ຄຳປຶກສາແນະນຳກຸ່ມເປົ້າໝາຍຕະຫຼອດ
  * ປະເມີນຜົນໄດ້ຮັບຈາກການນຳໃຊ້ເຕັກໂນໂລຢີເບື້ອງຕົ້ນຂອງກຸ່ມເປົ້າໝາຍ




ຮູບ.3. ຂັ້ນຕອນ ແລະວິທີການພັດທະນາວິຊາການບ້ານ





## 6. ຄຸນລັກສະນະພື້ນຖານຂອງຜູ້ນຳ

ການທີ່ພະນັກງານສົ່ງເສີມ ຫຼືນັກພັດທະນາຊຸມຊົນຈະສາມາດເລືອກເຟັ້ນໄດ້ຜູ້ນຳຊຸມຊົນ ຫຼືການທີ່ຈະຊອກເຫັນໄດ້ຜູ້ມີແວວໃນການນຳພາຊຸມຊົນຂອງເຂົາເຈົ້າເອງພັດທະນາໄດ້ຢ່າງໝັ້ນຄົງ, ກໍ່ເຫັນມີຄວາມຈຳເປັນທີ່ຈະຕ້ອງຮູ້ ແລະເຂົ້າໃຈໄດ້ຄຸນລັກສະນະພື້ນຖານຂອງຜູ້ນຳຊຸມຊົນ, ຊຶ່ງບາງຄຸນລັກສະນະພື້ນຖານຂອງຜູ້ນຳຊຸມຊົນທີ່ດີຄວນໃຫ້ມີດັ່ງນີ້:

- ສາມາດສ້າງບັນຍາກາດ ແລະຄວາມຮູ້ສຶກຕ້ອງເຮັດວຽກເປັນທີມລະຫວ່າງຜູ້ນຳ ແລະຜູ້ຖືກນຳໃນຊຸມຊົນຂອງຕົນ
- ໃຈກວ້າງເພື່ອ: ຮັບຟັງຜູ້ອື່ນ, ເປີດໂອກາດໃຫ້ຊັກຖາມ, ພະຍາຍາມເຂົ້າໃຈຄວາມຮູ້ສຶກ, ນຶກຄິດຂອງຜູ້ເຂົ້າຮ່ວມງານ, ໃຫ້ກຳລັງໃຈ ແລະໃຫ້ຄຳ ແນະນຳ
- ເປັນຜູ້ສະໜັບສະໜຸນໃຫ້ມີການສື່ຄວາມໝາຍ 2 ທາງສະເໝີ (ເຮັດໃຫ້ທຸກຄົນໄດ້ໂອ້ລົມກັນແລກປ່ຽນຄວາມຄິດຄວາມເຫັນ ລະຫວ່າງກັນ ແລະກັນສະເໝີ)
- ຮູ້ວິເຄາະຈຸດດີ / ຈຸດອ່ອນຂອງຕົນ ແລະກຽມພ້ອມທີ່ຈະປັບປຸງໃຫ້ດີຂຶ້ນ
- ຕ້ອງເຂົ້າໃຈລັກສະນະຄວາມສຳພັນ ຫຼືບົດບາດໜ້າທີ່ຂອງຕົນເອງໃຫ້ສະມາຊິກ ແລະຜູ້ກ່ຽວຂ້ອງອື່ນໆ ເພື່ອປະຕິບັດຕົນໃຫ້ຖືກຕ້ອງເໝາະສົມ ແລະສາມາດສ້າງຄວາມສຳພັນໃຫ້ມີຄວາມໝັ້ນຄົງ ແລະດີຂຶ້ນເລື້ອຍໆ
- ສາມາດສ້າງໃຫ້ເກີດມີຂະບວນການຮຽນຮູ້ທີ່ດີໃນຊຸມຊົນ
- ສາມາດວິເຄາະວິໃຈບັນຫາໄດ້ດີ, ຕັດສິນໃຈໄດ້ຖືກຕ້ອງເໝາະສົມ ແລະສາມາດຫາແນວທາງແກ້ໄຂບັນຫາໄດ້ເປັນຢ່າງດີມີເຫດມີຜົນ

- ສາມາດຈັດຕັ້ງ ແລະປະຕິບັດແຜນການແກ້ບັນຫາ ຫຼືການພັດທະນາໄດ້ດີລວມທັງການນໍາໃຊ້ຄົນ ແລະວັດຖຸອຸປະກອນທີ່ມີໃນທ້ອງຖິ່ນ
- ສາມາດສ້າງເງື່ອນໄຂ ແລະໂອກາດໃຫ້ສະມາຊິກຂອງຊຸມຊົນ ຫຼືກຸ່ມທີ່ມີແວວເປັນຜູ້ນໍາອື່ນໆ ໄດ້ກາຍເປັນຜູ້ນໍາຊຸມຊົນທີ່ດີສືບຕໍ່ໄປ
- ອື່ນໆ...ຕາມແຕ່ລະສະພາບເງື່ອນໄຂ ແລະສະພາບແວດລ້ອມຂອງຊຸມຊົນນັ້ນໆ.

# 7. ຂັ້ນຕອນ ແລະວິທີການພັດທະນາວິຊາການບ້ານ

## 7.1. ຄວາມເຂົ້າໃຈກ່ຽວກັບວິຊາການບ້ານ

ວິຊາການບ້ານ: ແມ່ນຊາວກະສິກອນໃດນຶ່ງທີ່ມີຄວາມກະຕືລືລົ້ນ, ຕື່ນຕົວນໍາເອົາເຕັກນິກວິຊາການຜະລິດແບບໃໝ່ໄປຜັນຂະຫຍາຍນໍາໃຊ້ເພື່ອປັບປຸງແບບແຜນການຜະລິດຂອງຕົນໃຫ້ດີຂຶ້ນເປັນກ້າວໆ, ເປັນຜູ້ທີ່ມີຄວາມສາມາດໃນການສັງລວມຖອດຖອນບົດຮຽນຈາກພຶດຕິກໍາການນໍາໃຊ້ເຕັກນິກຕ່າງໆເພື່ອຜັນຂະຫຍາຍຖ່າຍທອດໃຫ້ແກ່ຜູ້ອື່ນ ໃນຊຸມຊົນຂອງຕົນຈົນໃນທີ່ສຸດເກີດການຍອມຮັບພາຍໃນ ແລະນອກຊຸມຊົນ_ເຂົາຜູ້ນັ້ນກໍ່ແມ່ນຜູ້ນໍາຊຸມຊົນດ້ານວິຊາການໃດໜຶ່ງເໝືອນກັນ.

ຈາກຄວາມເຂົ້າໃຈຕໍ່ວິທີການເລືອກເຟັ້ນ ແລະການພັດທະນາຜູ້ນໍາຊຸມຊົນທີ່ໄດ້ກ່າວມາຂ້າງເທິງນັ້ນ, ເຫັນໄດ້ຈະແຈ້ງວ່າ, ການກໍານົດເອົາຊາວກະສິກອນຜູ້ທີ່ຈະເຮັດໜ້າທີ່ເປັນວິຊາການບ້ານຕ້ອງກໍາແໜ້ນບົດບາດໜ້າທີ່ຂອງວິຊາການບ້ານທີ່ຕ້ອງປະຕິບັດ ແລະມາດຖານລັກສະນະພ້ອມດ້ວຍທ່າແຮງທີ່ຄວນມີດັ່ງຈະໄດ້ກ່າວຕໍ່ໄປນີ້:



ອີກຢ່າງນຶ່ງການສ້າງວິຊາການບ້ານຕ້ອງມີຂັ້ນຕອນທີ່ສອດຄ່ອງກັບຂະບວນການສົ່ງເສີມໂດຍທົ່ວໄປ, ຖ້າບໍ່ດັ່ງນັ້ນຈະບໍ່ເກີດຜົນປະໂຫຍດອັນໃດແກ່ຕົນເອງ, ຄອບຄົວ ແລະຊຸມຊົນຂອງວິຊາການ ບ້ານພ້ອມທັງອົງການຈັດຕັ້ງລັດອີກດ້ວຍ.

ດັ່ງທີ່ຮັບຮູ້ກັນແລ້ວວ່າ**ວິທີການ/ຂັ້ນຕອນຂອງການສົ່ງເສີມ** (*Extension Methodology*) ແມ່ນປະກອບມີ 4 ຂັ້ນຕອນໃຫຍ່ດັ່ງໃນແຜນວາດລຸ່ມນີ້: ໂດຍເລີ້ມຈາກການກະຕຸ້ນໃຫ້ຊາວກະສິກອນເອງເປັນຜູ້ກໍານົດບັນຫາຕົ້ນຕໍທີ່ເຂົາເຈົ້າກໍາລັງປະເຊີນຢູ່, ຈາກນັ້ນຈຶ່ງລະດົມໃຫ້ເຂົາເຈົ້າກໍານົດກຸ່ມສະມາຊິກດວ້ຍກັນເພື່ອຮັບການຝຶກອົບຮົມນໍາໃຊ້ເຕັກນິກອັນໃໝ່ໂດຍພະນັກງານສົ່ງເສີມມີການຊຸກຍູ້ຕິດຕາມ ເປັນປະຈໍາຈົນເຖິງໄລຍະເກັບກູ້ຜົນຜະລິດ ແລ້ວຈຶ່ງຮ່ວມກັນປະເມີນຜົນ. ສິ່ງທີ່ໄດ້ຈັດຕັ້ງປະຕິບັດຮ່ວມກັນມາຕະຫຼອດລະດູການຜະລິດໜຶ່ງໆ ແລ້ວມີການວາງແຜນຂະຫຍາຍ ຫຼືແກ້ໄຂປັບປຸງໃນລະດູການຜະລິດຕໍ່ໄປ.

| | |
|---|---|
| ຖ້າເຂົາໄດ້ຟັງ | ເຂົາອາດລືມໄດ້ |
| ຫາກເຂົາໄດ້ເຫັນ | ເຂົາຈະຈຳໄດ້ |
| ເວລາໃດທີ່ເຂົາໄດ້ເຮັດ | ເຂົາຈະເຂົ້າໃຈ |
| ເມື່ອໃດທີ່ເຂົາໄດ້ຝຶກຝົນ | ເຂົາຈະຄຸ້ນເຄີຍ |
| ເວລາໃດທີເຂົາໄດ້ຜ່ານປະສົບການ | ເຂົາຈະເປັນຄົນເກັ່ງຂື້ນ |
| ເມື່ອໃດເຂົາຮູ້ສືກວ່າເຂົາເກັ່ງ | ເຂົາກໍ່ຈະສະໜຸກກັບວຽກ |
| ເວລາໃດທີ່ສະໜຸກ | ເຂົາກໍ່ຈະມີຄວາມສຸກກັບວຽກງານ |

ເມື່ອກອບຄວາມຄິດເປັນເຊັ່ນນີ້, ການພັດທະນາວິຊາການບ້ານກໍ່ຕ້ອງປະຕິບັດກັນຢ່າງເປັນລະບົບ, ເປັນຂະບວນການ ແລະສອດຄ່ອງກັບລະດູການຜະລິດແທ້ໆ ຈົນກ່ວາເຂົາເຫຼົ່ານັ້ນມີຄວາມໝັ້ນໃຈໃນການປະຕິບັດບົດບາດໜ້າທີ່ຂອງຕົນ. ຢາກເຮັດໄດ້ແນວນັ້ນ, ນັກສົ່ງເສີມ ຫຼື ນັກພັດທະນາກໍ່ຕ້ອງມີຮູບແບບການຈັດຕັ້ງປະຕິບັດຢ່າງມີລະບົບມີຂັ້ນຕອນແທ້ໆ ຫາກບໍ່ພຽງແຕ່ເປັນການປະຕິບັດແນວທາງນະໂຍບາຍໄປແບບລວມໆໂດຍບໍ່ໄດ້ມີການໄຈ້ແຍກຂຸດຄົ້ນກຳນົດຢຸດທະວິທີໃນການຈັດຕັ້ງປະຕິບັດຢ່າງມີຮູບປະທຳ.

ບັນດາຂັ້ນຕອນທີ່ຈະສະເໜີຕໍ່ໄປນີ້ ບໍ່ໄດ້ໝາຍຄວາມວ່າເປັນສິ່ງທີ່ປະເສີດແລະຕາຍຕົວ, ຫາກເປັນການສະເໜີແນວຄວາມຄິດ, ວິທີການເພື່ອສ້າງຄວາມເຂົ້າໃຈ ແລະ ທັດສະນະ ແກ່ນັກສົ່ງເສີມພວກເຮົາເພື່ອຈະໄດ້ປັບໃຊ້ໃຫ້ສອດຄ່ອງກັບສະພາບ ແລະທ່າແຮງຂອງບຸກຄົນເປົ້າໝາຍຮວມທັງກະໂຕພະນັກງານຜູ້ໄປສົ່ງເສີມເອງ.



## 7.2. ບົດບາດໜ້າທີ່ຂອງວິຊາການບ້ານ

ຜູ້ທີ່ເປັນວິຊາການບ້ານປຽບໄດ້ເໝືອນເປັນນັກວິຊາການກະສິກຳຄົນນຶ່ງທີ່ປະຈຳຢູ່ພື້ນຖານການຜະລິດ.ຈຶ່ງມີບົດບາດໜ້າທີ່ອັນຈຳເປັນພື້ນຖານຄື:

- ເປັນຜູ້ຜະລິດຕົວຈິງເວລາໃດກໍ່ເນັ້ນໃສ່ການຜະລິດທີມີປະສິດທິພາບຂື້ນເລື້ອຍໆ ໂດຍມີການລິເລີ້ມ ແລະນຳໃຊ້ເຕັກນິກວິທີການຜະລິດແບບໃໝ່ທີ່ເໝາະສົມ
- ເປັນຜູ້ທີ່ມັກຊອກຮູ້ ແລະເຮັດໃຫ້ສະມາຊິກໃນຊຸມຊົນເຫັນໄດ້ບັນຫາການຜະລິດ ແລະພ້ອມກັນຄົ້ນຄິດຫາແນວວິທີການແກ້ໄຂທີ່ເປັນເອກະພາບໃນຊຸມຊົນ
- ເປັນເຈົ້າການໃນການຈັດຕັ້ງນຳພາວາງແຜນການ ແລະປະຕິບັດກິດຈະກຳການຜະລິດຕ່າງໆ ໃນຄອບຄົວ ແລະຊຸມຊົນ
- ເປັນຜູ້ປະສານງານ
- ເປັນຜູ້ຖ່າຍທອດບົດຮຽນ, ເຕັກນິກການຜະລິດຕ່າງໆ ໃຫ້ແກ່ຄົນອື່ນໃນບ້ານ

## 7.3. ມາດຖານວິຊາການບ້ານ

ຜູ້ທີ່ຈະເປັນວິຊາການບ້ານຢ່າງໜ້ອຍຄວນມີມາດຖານ:

- ເປັນຜູ້ທີ່ມີຄວາມເສຍສະຫຼະເພື່ອປະໂຫຍດລວມຂອງຊຸມຊົນ (ໃຈກວ້າງຂວາງ / ສະມະຄິດີ).
- ມີພື້ນຖານຄວາມຮູ້ / ຄວາມສາມາດໃນການຜະລິດທາງການກະເສດສິ່ງໃດນຶ່ງດີພໍສົມຄວນ, ທັງນີ້ກໍ່ເພື່ອເປັນການສະດວກໃນການພັດທະນາປັບປຸງຄວາມຮູ້ຄວາມສາມາດຂອງຜູ້ກ່ຽວຂຶ້ນໄປເລື້ອຍໆ.
- ເປັນຜູ້ທີ່ມີຄວາມຫ້າວຫັນຢາກຮຽນຮູ້ເຕັກໂນໂລຊີໃໝ່ໆ ເພື່ອນຳໃຊ້ເຂົ້າໃນການຜະລິດຂອງຕົນແນໃສ່ຍົກປະສິດທິພາບຂຶ້ນເລື້ອຍໆ.

## 7.4. ເງື່ອນໄຂ

ຜູ້ທີ່ຈະເປັນວິຊາການບ້ານທີ່ເກັ່ງ ແລະດີສາມາດນຳໃຊ້ເຕັກນິກການຜະລິດໃໝ່ເຂົ້າໃນການຜະລິດໄດ້ທັນການ ແລະຮັບປະກັນຄວາມເປັນລະບົບ ແລະຕໍ່ເນື່ອງກາຍເປັນບ່ອນຮຽນຮູ້ຖອດຖອນບົດຮຽນໃຫ້ແກ່ຊາວກະສິກອນຄົນອື່ນຄວນມີບາງເງື່ອນໄຂພື້ນຖານຈຳເປັນຄື:

- ມີເນື້ອທີ່ການຜະລິດ (ເປັນຂອງຕົນເອງ ຫຼື ເປັນການເຊົ່າເຮັດກໍ່ໄດ້)
- ມີພື້ນຖານການສຶກສາ (ອ່ານອອກ / ຂຽນເປັນ_ມີວິຊາສະເພາະໃດໜຶ່ງຍິ່ງເປັນການດີ).
- ມີຖານະພໍທີ່ຈະນຳໃຊ້ປັດໃຈການຜະລິດໃໝ່ໄດ້.



ທີ່ກ່າວມາຂ້າງເທິງນີ້ ແມ່ນເປັນພຽງແຕ່ຄຸນລັກສະນະພື້ນຖານ ແລະເງື່ອນໄຂຈຳເປັນພື້ນຖານທີ່ຊາວກະສິກອນເປົ້າໝາຍໃດນຶ່ງຄວນມີ, ອັນຈະເປັນທ່າແຮງບົ່ມຊ້ອນໃຫ້ແກ່ການພັດທະນາ ແລະບຳລຸງສ້າງຂີດຄວາມສາມາດຂຶ້ນໄປໄດ້ໄວ ແລະຮັບປະກັນຄວາມຍືນຍົງອີກດ້ວຍ. ຢ່າງໃດກໍ່ດີບຸກຄົນຫຼືກຸ່ມບຸກຄົນທີ່ມີທ່າແຮງ ແລະຄຸນລັກສະນະພື້ນຖານທີ່ບົ່ມຊ້ອນດີ ແຕ່ຖ້າຂາດການປັບປຸງພັດທະນາຢ່າງມີຂັ້ນຕອນ ແລະວິທີການທີ່ເປັນລະບົບຕໍ່ເນື່ອງແລ້ວ, ບຸກຄົນ ຫຼືກຸ່ມບຸກຄົນເຫຼົ່ານັ້ນກໍ່ຈະບໍ່ສາມາດສະແດງຂີດຄວາມສາມາດທີ່ເປັນປະໂຫຍດຕໍ່ສັງຄົມລວມໄດ້ຢ່າງເຕັມທີ່. ດັ່ງນັ້ນ, ສິ່ງທີ່ຄວນຄຳນຶງເຖິງກໍ່ຄືຂັ້ນຕອນ ແລະວິທີການບຳລຸງສ້າງດັ່ງຈະໄດ້ກ່າວຕໍ່ໄປນີ້:

## 7.5. ຂັ້ນຕອນ ແລະ ວິທີການພັດທະນາວິຊາການບ້ານ

ວິຊາການບ້ານກໍ່ປຽບເໝືອນຕົວແທນ ທາງວິຊາການກະສິກຳທີ່ບໍ່ໄດສັງກັດໂດຍກົງ ໃນສາຍການຈັດຕັ້ງຄຸ້ມຄອງຂອງລັດ, ເພາະສະນັ້ນການປັບປຸງພັດທະນາຂີດຄວາມສາມາດ ຂອງວິຊາການບ້ານກໍ່ຕ້ອງກຳແໜ້ນໃນຫຼັກການສຶກສາຜູ້ໃຫຍ່, ຊຶ່ງເປັນການສຶກສານອກລະບົບ. ການທີ່ຈະເຮັດໃຫ້ບຸກຄົນເຫຼົ່ານັ້ນເກັ່ງ, ດີ ປະຕິບັດບົດບາດໜ້າທີ່ໄດ້ຕາມມາດຖານທີ່ໄດ້ກຳນົດ ແລະວາງໄວ້ນັ້ນ, ເຫັນໄດ້ຈະແຈ້ງທີ່ສຸດວ່າມີຄວາມສຳພັນກັບຄວາມຮູ້ຄວາມສາມາດໃນການປະຕິບັດບົດບາດໜ້າທີ່ ແລະຂັ້ນຕອນວິທີການສ້າງ ຫຼືປັບປຸງພັດທະນາວິຊາການບ້ານຂອງພະນັກງານທີ່ກ່ຽວຂ້ອງ. ດັ່ງນັ້ນ, ການພັດທະນາຂີດຄວາມສາມາດຂອງຄົນໃຫ້ເກັ່ງໃຫ້ດີນັ້ນຄວນນອນໃນກອບຄວາມຄິດທີ່ວ່າ: